ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 085 /ທຄຕລ .2021........

ນະຄອນຫຼວງວຽງຈັນ, ວັນທີ: ....23 SEP 2021........

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາ ໂຮງພິມພາກລັດ ແລະ ເອກະຊົນ ຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ :** ເຊີນເຂົ້າຮ່ວມການປະມູນລາຄາ ຜະລິດປະຕິທິນ ປະຈຳປີ 2022.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາບໍລິສັດ ແລະ ໂຮງພິມພາກລັດ ແລະ ເອກະຊົນ ເພື່ອເຂົ້າຮ່ວມການປະມູນລາຄາປະຕິທິນ ທຄຕລ ປະຈຳປີ 2022 ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ພາບປະກອບ | ຄຸນລັກສະນະ |
|---|---|---|---|
| 1 | **ປະຕິທິນແຂວນຝາ: ຈຳນວນ 30.000 ອັນ** |   | - ຂະໜາດ: 45*70 ຊມ (2 ເດືອນ/ໜ້າ).<br>- ນ້ຳໜັກເຈ້ຍ 200 ກຼາມ.<br>- ພິມ 4 ສີ: ພິມ 1 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ.<br>- ໃສ່ປ່ອງດູກງູເຫຼັກເບົາ ຂະໜາດ 40 ຊມ (ສີດຳ) ໃສ່ເທິງຫົວປະຕິທິນແຂວນຝາ.<br>- ການຫຸ້ມຫໍ່ປະຕິທິນ: ຖົງຢາງໃສ, 50 ອັນ/ແກັດ |
| 2 | **ປະຕິທິນຕັ້ງໂຕະ: ຈຳນວນ 20.000 ອັນ** |   | - ຂະໜາດ: 23*16*9 cm (2 ເດືອນ/ໜ້າ)<br>- ນ້ຳໜັກເຈ້ຍ 210 ແກຼມ.<br>- ພິມ 4 ສີ: ພິມ 2 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ.<br>- ໃສ່ປ່ອງດູກງູເຫຼັກເບົາເຕັມຫົວ (ສີຂາວ).<br>- ການຫຸ້ມຫໍ່ປະຕິທິນ: ຊອງເຈ້ຍສີຂາວ.<br>- 100 ອັນ/ແກັດ. |

**ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

❖ **<u>ເອກະສານຊອງທີ 1 (ບໍ່ປິດຊອງ):</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ເປັນໂຮງພິມຜະລິດພາຍໃນປະເທດເທົ່ານັ້ນ ແລະ ດຳເນີນທຸລະກິດໂຮງພິມຢ່າງໜ້ອຍ 2 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ 2021, ໃບຢັ້ງຢືນການເສຍອາກອນປີຜ່ານມາ ແລະ ເອກະສານກ່ຽວກັບຜົນງານການຜະລິດປະຕິທິນ ຜ່ານມາ (ຖ້າມີ).



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

2. ພິມຕົວຢ່າງປະຕິທິນຢ່າງລະ 1 ແຜ່ນ, ພ້ອມທັງກຳນົດລາຍລະອຽດຕາມສະເປັກຂ້າງເທິງ ແລະ ລະບຸເວລາການຈັດສົ່ງ.
3. ກຳນົດຍື່ນຊອງ ກ່ອນວັນຈັນ, ວັນທີ **27/09/2021 ເວລາ 11:00** ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ຕຶກ C.

❖ <u>**ເອກະສານຊອງທີ 2 (ປິດຊອງ)**</u>:

1. ໃບສະເໜີລາຄາໃຫ້ລະບຸເປັນສະກຸນເງິນກີບ, ລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມອາກອນມູນຄ່າເພີ່ມໃຫ້ຄົບຖ້ວນ.
2. ວັນອັງຄານ, ທີ **05/10/2021 ເວລາ 9:30** ໂມງ ແມ່ນມື້ເປີດຊອງປະມູນ, ສະນັ້ນ ເຈົ້າຂອງໂຮງພິມຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ຕຶກ C.
3. ຜູ້ສະໜອງຕ້ອງກຳນົດສະເປັກ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 05/11/2021)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

<u>**ໝາຍເຫດ:**</u> ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ທຄຕລໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

❖ **ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- ງວດທີ 1: ຊຳລະ 15% ຂອງມູນຄ່າ ພາຍຫຼັງທີ່ເຊັນສັນຍາ ແລະ ຈົດທະບຽນສານເປັນທີ່ຮຽບຮ້ອຍແລ້ວ.
- ງວດທີ 2: ຊຳລະ 85% ຂອງມູນຄ່າ ພາຍຫຼັງສົ່ງເຄື່ອງຄົບຕາມຈຳນວນ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຂອງ ທຄຕລ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ຄຳພຸດ ສິດທິລາດ

ລາຍລະອຽດເພີ່ມເຕີມ: *******

ຮູບພາບຕົວຢ່າງສິນຄ້າ:




ແຂວນຝາ
ຂະໜາດ
45 x 70 CM
3
ຈຳນວນ 7 ໃບ: - 1 ໃບ ພິມໜ້າປົກ
- 6 ໃບ ພິມຮູບນາງສາວທີ່ມີຮູບເດືອນ
BCEL
ສະບາຍດີປີໃໝ່
2022
70 cm
45 cm

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………./ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | (ໃຫ້ລະບຸລະອຽດ) | ປະເທດ....... | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: